ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຍທຂ PWT

ກະຊວງໂຍທາທິການ ແລະ ຂົນສົ່ງ

ເລກທີ 13481 /ຍທຂ

ນະຄອນຫລວງວຽງຈັນ, ວັນທີ 1 ກໍລະກົດ 2020

# ຂໍ້ຕົກລົງ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະ ຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟແຕ່ຊາຍແດນລາວ-ຈີນ ຫາ ນະຄອນວຽງຈັນ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 295/ນຍ, ລົງວັນທີ 04 ກັນຍາ 2017;
- ອີງຕາມ ຂໍ້ຕົກລົງ ຂອງນາຍົກລັດຖະມົນຕີ ວ່າດ້ວຍການແຕ່ງຕັ້ງ ຫົວໜ້າຄະນະຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟລາວ-ຈີນ ສະບັບເລກທີ 79/ນຍ, ລົງວັນທີ 07 ຕຸລາ 2019 ແລະ ການແຕ່ງຕັ້ງພະນັກງານຂັ້ນຮອງຫົວໜ້າຄະນະຄຸ້ມຄອງໂຄງການກໍ່ ສ້າງທາງລົດໄຟລາວ-ຈີນ ສະບັບເລກທີ 27222/ຍທຂ, ລົງວັນທີ 23 ຕຸລາ 2019;
- ອີງຕາມ ການສະເໜີ ຂອງກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 311/ຍທຂ.ກຈພ ລົງວັນທີ 14/05/2020.

## ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດ ທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກຂອງຄະນະຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟແຕ່ຊາຍແດນລາວ-ຈີນ ຫາ ນະຄອນວຽງຈັນ ເພື່ອເປັນບ່ອນອີງໃນການຈັດຕັ້ງ ແລະ ເຄື່ອນໄຫວວຽກງານຂອງໂຄງການດັ່ງກ່າວ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ຄະນະຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟ ແຕ່ຊາຍແດນ ລາວ-ຈີນ ຫາ ນະຄອນວຽງຈັນ ຂຽນຫຍໍ້ວ່າ **"ຄຟລຈ"** ເປັນພາສາອັງກິດ (**Laos-China Railway Project Management Committee ຂຽນຫຍໍ້ວ່າ " LCRM "**) ສັງກັດຢູ່ກະຊວງໂຍທາທິການ ແລະ ຂົນສົ່ງ ມີພາລະບົດບາດເປັນເສນາທິການໃຫ້ແກ່ ທ່ານຮອງນາຍົກລັດຖະມົນຕີ, ຫົວໜ້າຄະນະຊີ້ນຳໂຄງການກໍ່ສ້າງທາງລົດໄຟລາວ-ຈີນ ແລະ ລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ, ຮອງຫົວໜ້າຄະນະຊີ້ນຳໂຄງການກໍ່ສ້າງທາງລົດໄຟລາວ-ຈີນ (ຜູ້ປະຈຳການ) ໃນການຄຸ້ມຄອງ, ຕິດຕາມ ແລະ ປະສານສົມທົບກັບບໍລິສັດທາງລົດໄຟລາວ-ຈີນ ຈຳກັດ, ປະສານ ສົມທົບກັບ

ທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດບັນດາຂັ້ນຕອນຕ່າງໆ ຂອງໂຄງການກໍ່ສ້າງທາງລົດໄຟ ແຕ່ຊາຍແດນ ລາວ-ຈີນ ຫາ ນະຄອນວຽງຈັນ ໃຫ້ສຳເລັດຕາມແຜນການ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

1. ຄຸ້ມຄອງ, ຕິດຕາມ ແລະ ປະສານສົມທົບກັບບໍລິສັດທາງລົດໄຟລາວ-ຈີນ ຈຳກັດ ເພື່ອຈັດຕັ້ງປະຕິບັດໂຄງການ ແຕ່ມື້ເລີ່ມຕົ້ນຈົນສຳເລັດໂຄງການ;
2. ປະສານສົມທົບກັບຂະແໜງການຕ່າງໆ ທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດບັນດາໜ້າວຽກ ຂອງໂຄງການໃຫ້ສຳເລັດຕາມຈຸດປະສົງ ແລະ ຄາດໝາຍຂອງໂຄງການ;
3. ຕິດຕາມ ແລະ ຄຸ້ມຄອງ ການນຳເຂົ້າແຮງງານ, ວັດຖຸອຸປະກອນ, ກົນຈັກ ແລະ ຍານພາຫະນະຮັບໃຊ້ໂຄງການກໍ່ສ້າງທາງລົດໄຟລາວ-ຈີນ;
4. ໄກ່ເກ່ຍບັນຫາທີ່ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ການຄຸ້ມຄອງຄວາມປອດໄພຮອບດ້ານ, ການແກ້ໄຂສິ່ງກີດຂວາງ, ເວນຄືນທີ່ດິນ, ແລະ ການປະຕິບັດສັນຍາສຳປະທານ;
5. ປະສານສົມທົບກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງທັງຝ່າຍລາວ ແລະ ຈີນ ໃນການວາງແຜນບຳລຸງ ແລະ ກໍ່ສ້າງບຸກຄະລາກອນ ຢູ່ໃນຂະແໜງການຕ່າງໆ ທີ່ກ່ຽວກັບການລົດໄຟ;
6. ລາຍງານຄວາມຄືບໜ້າ ກ່ຽວກັບການຈັດຕັ້ງປະຕິບັດໂຄງການກໍ່ສ້າງທາງລົດໄຟລາວ-ຈີນ ໃຫ້ຂັ້ນເທິງຢ່າງເປັນປະຈຳ;
7. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຂອງຫົວໜ້າຄະນະຊີ້ນຳໂຄງການກໍ່ສ້າງທາງລົດໄຟລາວ-ຈີນ.

**ມາດຕາ 4 ຂອບເຂດສິດ.**

1. ສະເໜີປັບປຸງ, ສ້າງຕັ້ງ ຫຼື ລົບລ້າງກົງຈັກການຈັດຕັ້ງ, ຕຳແໜ່ງງານທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນໃນເມື່ອເຫັນວ່າບໍ່ສອດຄ່ອງ;
2. ສະເໜີປັບປຸງ, ດັດແປງ ຫຼື ລົບລ້າງຂໍ້ກຳນົດກົດລະບຽບທີ່ເຫັນວ່າບໍ່ສອດຄ່ອງກັບວຽກງານວິຊາສະເພາະຂອງຕົນ, ອອກຄຳແນະນຳ ແລະ ແຈ້ງການດ້ານວິຊາສະເພາະຕໍ່ພາກສ່ວນທີ່ກ່ຽວຂ້ອງ;
3. ສະເໜີແຕ່ງຕັ້ງ, ສັບຊ້ອນ, ຍົກຍ້າຍ, ເລື່ອນຊັ້ນ, ຍ້ອງຍໍ, ປະຕິບັດວິໄນ, ປົດຕຳແໜ່ງລັດຖະກອນທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ບົນພື້ນຖານການເຫັນດີເປັນເອກະພາບ ຂອງກົມຈັດຕັ້ງ ແລະ ພະນັກງານ;
4. ພົວພັນປະສານສົມທົບກັບທຸກອົງການຈັດຕັ້ງຂອງພັກ-ລັດ ແລະ ປະຊາຊົນ ເພື່ອພ້ອມກັນຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍ, ມະຕິຄຳສັ່ງຂອງພັກ, ກົດໝາຍ, ດຳລັດ ແລະ ລະບຽບການຂອງລັດ;
5. ຕິດຕາມ ແລະ ກວດກາ ການເຄື່ອນໄຫວຮອບດ້ານ ຂອງບັນດາພະແນກການຕ່າງໆ ທີ່ຂຶ້ນກັບຄະນະຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟລາວ-ຈີນ;
6. ຂຶ້ນແຜນ, ຄຸ້ມຄອງ ແລະ ນຳໃຊ້ງົບປະມານ, ຍານພາຫະນະ, ກົນຈັກ ແລະ ວັດຖຸປະກອນຕ່າງໆ ຕາມການມອບໝາຍຂອງຄະນະຊີ້ນຳໂຄງການກໍ່ສ້າງທາງລົດໄຟລາວ-ຈີນ;
7. ໂຄສະນາເຜີຍແຜ່ວຽກງານ, ຜົນສຳເລັດທາງດ້ານເຕັກນິກ, ວິທະຍາສາດ ແລະ ຫົວຄິດປະດິດສ້າງທີ່ກ່ຽວຂ້ອງກັບໂຄງການ;
8. ປະສານສົມທົບກັບ ຄະນະຊີ້ນຳໂຄງການຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອອຳນວຍຄວາມສະດວກໃນດ້ານຕ່າງໆ ໃນການຈັດຕັ້ງປະຕິບັດໂຄງການ;